DEPARTMENT OF HEALTH

# ສຳເນົາຂໍ້ມູນທີ່ສຳຄັນຂອງການຮັບໂດດສ໌ທີ່ສອງຂອງ ໂຄວິດ-19 ວັກຊີນ

[ຈັງຫວະເພັງ]

[Kris Ehresmann] ສະບາຍດີ ຊື່ຂອງຂ້ອຍແມ່ນ ຄຣິດ ອີແຣັດແມນ ແລະ ຂ້ອຍແມ່ນຜູ້ອຳນວຍການຂອງສູນພະຍາດຕິດຕໍ່ຂອງ ພະແນກສາທາລະນະສຸກລັດມິນນີໂຊຕ້າ (Minnesota Department of Health). ຂ້າພະເຈົ້າຕ້ອງການເວົ້າກັບທ່ານມື້ນີ້ກ່ຽວກັບ ສິ່ງທີ່ສຳຄັນຂອງ ໂດດສ໌ທີສອງຂອງວັກຊີນໂຄວິດ-19 ຂອງທ່ານ.

ສຳລັບວັກຊີນໂຄວິດ-19 ທີ່ມີໃນປັດຈຸບັນ, ຊຶ່ງຕ້ອງໄດ້ຮັບ ສອງໂດດສ໌. ຜູ້ທີ່ໃຫ້ຢາວັກຊີນແກ່ທ່ານຈະແຈ້ງໃຫ້ທ່ານຮູ້ວ່າເມື່ອໃດທ່ານ ຈະໄດ້ຮັບໂດດສ໌ທີສອງ, ແລະ ຖ້າທ່ານຕ້ອງການສອງໂດດສ໌, ຂໍ້ຄວາມນີ້ແມ່ນເພື່ອທ່ານ.

ວັກຊີນໂຄວິດ-19 ທັງໝົດທີ່ມີແມ່ນມີຄວາມປອດໄພ ແລະ ມີປະສິດທິຜົນ. ດັ່ງນັ້ນ ທ່ານຄວນຈະຮັບວັກຊີນທີ່ໄດ້ສະເໜີໃຫ້ທ່ານ. ສຳລັບວັກຊີນໂຄວິດ-19 ທີ່ມີສອງໂດດສ໌,
ມັນສຳຄັນຫຼາຍທີ່ຕ້ອງຮັບສອງໂດດສ໌ເພື່ອການປ້ອງກັນໃຫ້ໄດ້ຮັບໝາກຜົນທີ່ດີທີ່ສຸດຕໍ່ກັບພະຍາດໂຄວິດ-19. ຈື່ໄວ້ວ່າ, ທັງສອງ ໂດດສ໌ຕ້ອງແມ່ນຜະລິດຕະພັນວັກຊີນຊະນິດດຽວກັນ. ໜຶ່ງໂດດສ໌ທີ່ໄດ້ຮັບຕ້ອງຫ່າງກັນລະຫວ່າງສາມຫາສີ່ອາທິດ ອີງຕາມວັກຊີນ ສອງໂດດສ໌ຊະນິດນັ້ນໆທີ່ທ່ານໄດ້ຮັບ.

ເມື່ອທ່ານໄດ້ຮັບວັກຊີນ ໂດດສ໌ທຳອິດ, ທ່ານຄວນຈະນັດສຳລັບການຮັບໂດດສ໌ທີສອງ. ມັນເປັນຄວາມຄິດທີ່ດີທີ່ຈະຕ້ອງຂຽນລົງໃສ່ ປະຕິທິນ ຫຼື ໝາຍໄວ້ໃນໂທລະສັບຂອງທ່ານເພື່ອຊ່ວຍໃຫ້ທ່ານຈື່.

ມັນອາດຈະມີສະພາບການທີ່ບາງຄົນບໍ່ສາມາດຮັບໂດດສ໌ທີສອງຂອງພວກເຂົາໃນເວລາທີ່ເໝາະສົມ. ບໍ່ເປັນຫຍັງ. ພວກເຮົາຈະ ສົ່ງເສີມທ່ານພະຍາຍາມ ແລະ ນັດໝາຍສຳລັບໂດດສ໌ທີສອງໄວເທົ່າທີ່ຈະໄວໄດ້. ທ່ານບໍ່ຈຳເປັນຕ້ອງເລີ່ມວັກຊີນຊະນິດໃໝ່.

ໃນຂະນະທີ່ໄດ້ມີຂ່າວກ່ຽວກັບຄວາມບໍ່ແນ່ນອນຂອງການປ້ອງກັນຈາກການຮັບ ວັກຊີນ ໜຶ່ງໂດດສ໌ ຈາກວັກຊີນທີ່ຄວນໄດ້ຮັບສອງ ໂດດສ໌, ຍັງຄົງມີຫຼາຍຢ່າງທີ່ພວກເຮົາຕ້ອງໄດ້ຮຽນຮູ້. ອົງການອາຫານ ແລະ ຢາຂອງສະຫະລັດອາເມລິກາ (FDA) ຍັງຄົງແນະນຳ ວັກຊີນຊະນິດສອງໂດດສ໌ເຫຼົ່ານີ້ ແລະ ໄດ້ຮັບທັງສອງຂອງຊະນິດສອງໂດດສ໌ຂອງວັກຊີນໂຄວິດ-19 ເພື່ອໃຫ້ແນ່ໃຈວ່າ ທ່ານໄດ້ຮັບ ການປ້ອງກັນທີ່ດີທີ່ສຸດຕໍ່ພະຍາດ.

ຂອບໃຈ, ສຳລັບການຮັບຢາວັກຊີນ. ທຸກໆຄົນທີ່ໄດ້ຮັບຢາວັກຊີນເຮັດໃຫ້ພວກເຮົາກ້າວເຂົ້າໄປໃກ້ອີກໜຶ່ງຂັ້ນໃນການທຳລາຍໂຄວິດ.

[ຈັງຫວະເພັງ]

Minnesota Department of Health
Communications Office
PO Box 64975
St. Paul, MN 55164-0975
651-201-4989
health.communications@state.mn.us
www.health.state.mn.us

3/10/21 (Lao)

ຕ້ອງການໄດ້ຮັບຂໍ້ມູນນີ້ເປັນຮູບແບບອື່ນ, ໂທຫາ: 651-201-4989